# ບົດລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກ ສົກປີ 2013-2014 ຂອງໂຄງການປັບປຸງຊີວິດການເປັນຢູ່ເພື່ອຄ້ຳປະກັນດ້ານໂພສະນາການ (ຄປພ LONG) ໃນເມືອງຊ່ອນ

ລາຍງານໂດຍ: ຜູ້ປະສານງານໂຄງການຂັ້ນເມືອງ ເມືອງຊ່ອນ

## I. ສະພາບລວມ

### 1.ປະຫວັດຄວາມເປັນມາຂອງໂຄງການ ຄປຟ ເມືອງຊ່ອນ ແຂວງ ຫົວພັນ

ເມືອງຊ່ອນໃນປັດຈຸບັນ ກ່ອນນີ້ ປະກອບມີ 5 ກຸ່ມບ້ານທີ່ຂື້ນກັບເມືອງວຽງທອງ ໃນ 5 ກຸ່ມດັ່ງກ່າວນັ້ນມີ ຫຼາຍໝູ່ບ່ານ ທີ່ມີຄວາມທຸກຍາກ ຂາດເຂີນ ທາງດ້ານເສດຖະກິດ,ສັງຄົມ.ຕົ້ນປີ 2013ໂຄງການ ຄປພໄດ້ຂະຫຍາຍບ້ານເປົ້າໝາຍໂຄງການຊຸດທີ່ 2 ໃນເມືອງ (ວຽງທອງເກົ່າ) ທາງໂຄງການ ແລະ ການນຳເມືອງ ໄດ້ຂັດເລືອກ ເອົາບ້ານເປົ້າໝາຍ ຂອງ

ໂຄງການຈຳນວນໜຶ່ງໃນກຸ່ມຊ່ອນເໜືອ ແລະ ຊ່ອນ
ໃຕ້ຈຳນວນ 14 ບ້ານເພາະວ່າ 2 ກຸ່ມດັ່ງກ່າວນີ້
ປະກອບມີ ຄອບຄົວທີ່ທຸກຍາກຫຼາຍ.

ມາຮອດເດືອນ ມັງກອນ 2014 ຂັ້ນເທິງໄດ້
ແບ່ງເມືອງວຽງທອງ ອອກເປັນ2ເມືອງ ຄືເມືອງຮ້ຽມ
ແລະ ເມືອງຊ່ອນ ໂຄງການຂອງພວກເຮົາກໍ່ມີຄວາມ
ຈຳເປັນຕ້ອງໄດ້ແບ່ງອອກເປັນ 2 ເມືອງເຊັ່ນກັນ.

ໃນປັດຈຸບັນນີ້ຈຶ່ງມີໂຄງການ ຄປພ ເມືອງຊ່ອນ

## 2.ຂອບເຂດຂອງໂຄງການໃນເມືອງຊ່ອນ

- ຂອບເຂດຂອງໂຄງການ ກວມເອົາ 3 ກຸ່ມບ້ານປະກອບມີ 20 ໝູ່ບ້ານ,ຂະຫຍາຍໃນຊຸດທຳອິດປີ 2013 ມີ 14 ບ້ານ ທີ່ນອນຢູ່ໃນກຸ່ມ ຊ່ອນເໜືອ 8ບ້ານ ກຸ່ມຊ່ອນໃຕ້ 6 ບ້ານ ຂະຫຍາຍຊຸດທີ່ 2 ປີ 2014 ມີ 4 ບ້ານ ໃນກຸ່ມເມືອງເກົ່າ.

## 3. ດ້ານບຸກຄະລາກອນ.

- ພະນັກງານທັງໝົດ 9 ທ່ານ ຍິງ 4 ທ່ານ
- ໃນນັ້ນປະກອບມີຜູ້ປະສານງານຂັ້ນເມືອງ 1 ທ່ານ
- ວິຊາການປັບປຸງຊີວິດການເປັນຢູ່ 4 ທ່ານ,ຍິງ 0 ທ່ານ
- ວິຊາການໂພຊະນາການ 4 ທ່ານ,ຍິງ 4 ທ່ານ.
- ຍັງຕ້ອງການອີກ 2 ທ່ານ ຄືວິຊາການ ປຊຍຂັ້ນເມືອງ 1 ທ່ານ ວິຊາການ ພຊກ ແລະ ບໍລິຫານການເງິນ 1 ທ່ານ

## II.ໜ້າວຽກທີ່ໄດ້ຈັດຕັ້ງປະຕິບັດສຳເລັດ ສົກປີ 2013-2014

### ກ. ກິດຈະກຳປັບປຸງຊີວິດການເປັນຢູ່.

1). ໃນຕົ້ນເດືອນມັງກອນ 2013 ໄດ້ລົງຂັດເລືອກ ບ້ານເປົ້າໝາຍໂຄງການໃນກຸ່ມ ຊ່ອນໃຕ້,ຊ່ອນເໜືອ ແລະ ເມືອງເກົ່າ

2). ເດືອນ 2/2013ໄດ້ ລົງເປີດກອງປະຊຸມ ແນະນຳໂຄງການທັງໝົດ14 ບ້ານໃນກຸ່ມຊ່ອນເໜືອ ແລະ ຊອນໃຕ້

3). ເດືອນ 4/2013 ລົງເຮັດ (PRA) ເອົາຂໍ້ມູນທົ່ວໄປຂອງບ້ານແລະສ້າງແຜນພັດທະນາບ້ານຂອງ 14 ບ້ານ.

4). ເດືອນ 7/2013 ລົງສ້າງຕັ້ງກຸ່ມ ກຊກ 14 ບ້ານ.

5).ເດືອນ 10 / 2013 ເລີ້ມຕົ້ນເກັບເງິນທ້ອນຂອງ ກຸ່ມ ກຊກເດືອນລະຄັ້ງ ຈົນເຖິງປະຈຸບັນ.

6).ເດືອນ 4/2014 ລົງປະເມີນຄວາມເຂັ້ມຂອງກຸ່ມ ກຊກ ໃນ14 ບ້ານເປົ້າໝາຍ.

7).ເດືອນ 5/2014 ລົງເປີດກອງປະຊຸມສ້າງແຜນ ການ ລົງທຶນຄົວເຮືອນຂອງ 14 ບ້ານ

8).ເດືອນ 6/2014 ຂຽນ ບົດສະເໜີໂຄງການຂອງ 14 ບ້ານເປົ້າໝາຍ

9).ເດືອນ 6/2014ເປີດກອງປະຊຸມແນະນຳໂຄງການ,ສ້າງ

ທະນາບ້ານແລະສ້າງຕັ້ງກຸ່ມຊ່ວຍເຫຼືອຊຶ່ງກັນແລະ ກັນ

10).ເດືອນ 7/2014 ເປີດກອງປະຊຸມຕັດສິນຮັບຮອງເອົາບົດສະເໜີໂຄງການ ຂອງ14 ບ້ານດັ່ງກ່າວ.

ຂ. ກິດຈະກຳໂພຊະນາການ.

1).ເດືອນ2/2013 ໄດ້ລົງໂຄສະນາເຜີຍແຜ່ ວຽກງານສຸຂະສຶກສາຂອງແມ່ຖືພາ,ແມ່ ລູກອ່ອນໃນ 14 ບ້ານເປົ້າໝາຍໄດ້ ບ້ານລະ1ຄັ້ງ.

2).ເດືອນ3/2013 ລົງຊຸກຍູ້ ໃຫ້ສ້າງສວນຄົວ ແລະ ປູກຜັກ ລົງໄປແນະນຳເດືອນລະ 1 ຄັ້ງຈົນເຖິງປັດຈຸບັນ.

3). ເດືອນ4/2014ປະສານງານຮ່ວມມືກັບຫ້ອງການສາທາ ໃນການລົງເຮັດສຸຂະສຶກສາໃຫ້ແກ່ແມ່ ແລະ ເດັກໃນ 14 ບ້ານ

4). ລົງສ້າງຕັ້ງກຸ່ມໂພສະນາການ ແລະສ້າງແຜນງົບປະມານ ຂອງວຽກງານໂພສະນາການ ກຸ່ມຊ່ອນເໜືອ 1 ບ້ານ ກຸ່ມ ຊ່ອນໃຕ້ 1 ບ້ານ

## ຄ. ວຽກງານສ້າງຄວາມເຂັ້ມແຂງໃຫ້ບຸກຄະລະກອນແລະເຂົ້າຮ່ວມກອງປະຊຸມຕ່າງໆ

1). ໄດ້ເຂົ້າຮ່ວມກອງປະຊຸມໄຕ່ມາດ ຢູ່ ແຂວງ ຫົວພັນ ທັງໝົດໄດ້ 3 ຄັ້ງຜູ້ເຂົ້າຮ່ວມ ຫລຍແຂວງແລະຫລຍເມືອງ ທຸກເມືອງແລະຫລຍລອງເມືອງຮ້ຽມ,ເມືອງຊ່ອນ

2).ເຂົ້າຮ່ວມກອງປະຊຸມປະຈຳປີຢູ່ແຂວງສະຫວັນນະເຂດ 1 ຄັ້ງຜູ້ເຂົ້າຮ່ວມ ທລຍ ສູນກາງ,ທລຍແຂວງຫົວພັນ, ສະຫວັນນະເຂດ,ພະນັກງານທລຍເມືອງຮຸ້ງມ,ເຊໂປນ

3). ໄດ້ໄປທັດສະນະສຶກສາຖອດຖອນບົດຮຽນວຽກງານປູກຝັງລ້ຽງສັດຢູ່ ວຽງຈັນ,ສະຫວັນນະເຂດ ສາລະວັນ ,ເຊກອງ 1 ຄັ້ງ

4). ໄດ້ເຂົ້າຮ່ວມການເຝິກອົບຮົມທັງໝົດ 24 ຄັ້ງ ດັ່ງນີ້:

- ຝຶກອົບຮົມ ເຕັກນິກການລ້ຽງສັດ ທີ່ເມືອງຮຸ້ງມ 1 ຄັ້ງ
- ຝຶກອົບຮົມການປຸງແຕ່ງອາຫານທີ່ວຽງຈັນ 1 ຄັ້ງ
- ຝຶກອົບຮົມການເປັນຜູ້ອຳນວຍຄວາມສະດວກ 2 ຄັ້ງຢູ່ວຽງຈັນ 1 ຄັ້ງຢູ່ເມືອງຮຸ້ງມ 1 ຄັ້ງ.

- ຝຶກອົບຮົມບໍລິຫານການເງິນ ຢູ່ເມືອງ ຮົ້ງມ 1 ຄັ້ງ
- ຝຶກອົບຮົມຄຸ້ມຄອງບໍລິຫານສູນໂພສະນາການຢູ່ເມືອງ ຮົ້ງມ 1 ຄັ້ງ
- ຝຶກອົບຮົມຄວາມຮູ້ເບື້ອງຕົ້ນດ້ານໂພສະນາການໄດ້1ຄັ້ງ
- ຝຶກອົບຮົມການວາງແຜ່ນແບບມີສ່ວນຮ່ວມ 1 ຄັ້ງ
- ຝຶກອົບຮົມການປະເມີນຄວາມເຂັ້ມແຂງຂອງກຸ່ມ ກຊກ 1 ຄັ້ງ
- ຝຶກອົບຮົມເຕັກນິກການລ້ຽງສັດ,ການຕ່ຳຫູກໃຫ້ຊາວບ້ານທັງໝົດໄດ້ 14 ຄັ້ງ
- ຝຶກອົບຮົມການເອົາຂໍ້ມູນຂຽນບົດສະເໜີໂຄງການ1 ຄັ້ງ

## ໆ.ວຽກປະສານງານກັບພາກລັດ

- ໄດ້ສ້າງຂໍ້ຕົກລົງແຕ່ງຕັ້ງຄະນະຊີ້ນໍາການຈັດຕັ້ງປະຕິບັດຂອງພາກລັດ.
- ໄດ້ສ້າງຂໍ້ຕົກລົງແຕ່ງຕັ້ງວິຊາການພາກລັດເພື່ອລົງມາຊ່ວຍວຽກໃນບາງຂັ້ນຕອນ
- ໄດ້ຂໍທິດຊີ້ນໍາ ການຈັດຕັ້ງປະຕິບັດວຽກ ນໍາຄະນະຊີ້ນໍາພາກລັດເປັນໄລຍະ
- ໄດ້ປະສານງານ ຂໍພະນັກງານພາກລັດ ລົງຊ່ວຍຈັດຕັ້ງປະຕິບັດວຽກຢູ່ຂັ້ນບ້ານຕະຫຼອດມາ
- ໄດ້ລາຍງານວຽກງານຂອງພວກເຮົາໃຫ້ຄະນະຊີ້ນໍາພາກລັດຮັບຮູ້ນໍາປົກກະຕິ

# III. ດ້ານດີ ຜົນໄດ້ຮັບ ແລະ ອ່ອນທີ່ຍັງຄ້າງຄາ

## ກ. ດ້ານດີ

- ພະນັກງານມີຄວາມສາມັກຄີ ຮັກແພງກັນ.
- ການຈັດຕັ້ງປະຕິບັດ ວຽກງານສຳເລັດ ຕາມການມອບໝາຍ.
- ອຳນາດການປົກຄອງຂັ້ນເມືອງ ແລະ ບ້ານ,ລວມທັງປະຊາຊົນ ຈຳນວນຫຼາຍ ໄດ້ໃຫ້ການຮ່ວມມື ແລະ ມີຄວາມສົນໃຈຕໍ່ວຽກງານ ຫຼາຍພໍສົມຄວນ.
- ທີມງານ ຫລຍ/ຄປພ ແຂວງ,ສູນກາງ ໄດ້ໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດຕະຫຼອດມາ

## ❖ ຜົນໄດ້ຮັບໃນໄລຍະຜ່ານມາ

ກ.ວຽກກິດຈະກໍາປັບປຸງຊີວິດການເປັນຢູ່, ໂພສະນາການ ແລະວຽກງານສ້າງຄວາມເຂັ້ມແຂງໃຫ້ພະນັກງານ,ວຽກປະສານງານກັບພາກລັດ

1.ໃນໄລຍະສົກປີ 2013-2014 ສະມາຊິກ ກຸ່ມ ກຊກ ຂອງ14 ບ້ານ ສາມາດທ້ອນເງິນ ຮ່ວມກັນໄດ້ 10,834,000 ກີບ.

2.ການລົງເຮັດວຽກງານສຸກຂະສຶກສາ ໃຫ້ແມ່ຍິງ ເດັກນ້ອຍເຮັດໃຫ້ເຂົາເຈົ້າໄດ້ຮັບຮູແລະເຂົ້າໃຈດີກ່ຽວກັບການຮັກສາອະນາໄມ,ການກິນການຢູທີ່ຖືກຕ້ອງຕາມຫຼັກໂພສະນາການ

3. ພະນັກງານໄດ້ຮັບໂອກາດຝຶກອົບຮົມ,ທັດສະນະສຶກສາຫຼາຍຄັ້ງພໍສົມຄວນເຮັດໃຫ້ພວກເຮົາມີຄວາມຮູ້ຄວາມສາມາດຫຼາຍຂື້ນຕື່ມ

4.ຜ່ານການຈັດຕັ້ງປະຕິບັດກິດຈະກຳໄລຍະຜ່ານມາພາກລັດ ໄດ້ເຂົ້າຮ່ວມ ແລະ ຮັບຮູ້ ວຽກງານຂອງພວກເຮົາ ຕະຫຼອດມາເຊິ່ງມີຫຼາຍຢ່າງທີ່ຂັ້ນເທິງພາກລັດມີຄວາມພໍໃຈແລະຊົມເຊີຍເຊິ່ງຖືເປັນຜົນງານຂອງອ້າຍນ້ອງທີມງານກໍ່ຄືບົດບາດຊີ້ສ່ຽງແລະຜົນສຳເຫຼັດຂອງໂຄງການພວກເຮົາ

## ຂ.ດ້ານອ່ອນທີ່ຕ້ອງໄດ້ປັດປຸງແກ້ໄຂ

1.ບຸກຄະລາກອນ,ພາຫະນະ,ອຸປະກອນຮັບໃຊ້ ບໍ່ທັນພຽງພໍ

2.ລະບຽບການໃຊ້ຈ່າຍງົບປະມານຂອງໂຄງການບໍ່ຈະແຈ້ງ ແລະບໍ່ມີເອກະສານລະອຽດເຮັດໃຫ້ການຈັດຕັ້ງປະຕິບັດວຽກ ເກີດຄວາມບໍ່ເຂົ້າໃຈ.

## IV.ຂໍ້ສະເໜີ

1.ສະເໜີຂໍໃຫ້ທາງຂັ້ນເທິງຄົ້ນຄວ້າພະນັກງານຂັ້ນເມືອງ 2 ທ່ານ

2.ສະເໜີຂໍອຸປະກອນຮັບໃຊ້ຫ້ອງການດັ່ງນີ້:

- ໂຕະເຮັດວຽກ 4 ໂຕະ, ຕັ່ງນັ້ງ 15 ຕັ່ງ
- ຕູ້ເກັບເອກະສານ 3 ໜ່ວຍ, ຄອມພິວເຕີ 2 ຊຸດ
- ຈັກປິ່ນເຕີ 1 ຊຸດ, ເຄື່ອງແຟັກເອກະສານ 1 ຊຸດ
- ກະໂດໂນເກັບເອກະສານ 20 ອັນ,ກໍ່ປາກສຽບໃຫ່ຍ 1 ອັນ
- ສະເໜີຂໍລົດຈັກ 4 ຄັນ (ສໍາລັບລົດເກົ່າໃຊ້ບໍ່ໄດ້ແລ້ວແປງຫຼາຍເທື່ອແລ້ວໝົດເງິນຫຼາຍແຕ່ໄປໃຊ້ບໍ່ພໍເທົ່າໃດມື້ກໍ່ເພອີກ)

  ປັດຈຸບັນບໍ່ມີພາຫະນະຮັບໃຊ້ພຽງພໍໃນການອອກໄປເຮັດວຽກ

3.ສະເໜີຂໍງົບເພື່ອເສີ້າ ແລະ ສ້ອມແປງຫ້ອງການ ເພາະເປັນເມືອງໃໝ່ລັດເພີ່ນຍັງບໍ່ທັນມີຫ້ອງການໃຫ້.

4.ຝຶກອົບຮົມວຽກງານ ການເງິນ ແລະ ສັດຕະແພດ

## V. ແຜນໃນ 3 ເດືອນຕໍ່ໜ້າ ເດືອນ8 -10 /2014ມີດັ່ງນີ້:

- ❖ ວຽກ14ບ້ານໃນກຸ່ມຊ່ອນເໜືອ ແລະ ຊ່ອນໃຕ່
- ➢ ສະເໜີຂໍງົບປະມານກິດຈະກໍາຂອງ 14 ບ້ານ ໃນກຸ່ມຊ່ອນເໜືອ,ຊ່ອນໃຕ້
- ➢ ສະເໜີຂໍງົບປະມານຝຶກອົບຮົມກິດຈະກໍາຍ່ອຍ
- ➢ ຈັດຕັ້ງປະຕິບັດການຝຶກອົບຮົມກິດຈະກໍາຍ່ອຍ
- ➢ ຈັດຕັ້ງປະຕິບັດ ກິດຈະກໍາປັບປຸງຊີວິດການເປັນຢູ່ໃນ 14 ບ້ານ
- ➢ ຈັດຕັ້ງປະຕິບັດກິດຈະກໍາຂອງສູນໂພສະນາການຂອງ 2 ບ້ານ ຄື: ວັດ ແລະ ບ້ານບໍ່

➢ ຂອບໃຈ

## ຮູບກິດຈະກໍາຄອບຄົວຕົວແບບໃນການລ້ຽງໄກ່ລາດ,ເປັດ ຈໍານວນ 3 ຄອບຄົວ ບ້ານຫ້ວຍສາ ເມືອງຮ້ຽມ





